ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 68 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ 28.04.2008

# ດຳລັດ

## ວ່າດ້ວຍການຮັບຮອງເອົາບັນຊີປະເພດທຸລະກິດຄວບຄຸມ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2007.

- ອີງຕາມກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005.

- ອີງຕາມການສະເໜີ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1557/ອກ, ລົງວັນທີ 31 ສິງຫາ 2007.

### ນາຍົກລັດຖະມົນຕີ ອອກດຳລັດ :

ມາດຕາ 1 : ຮັບຮອງເອົາບັນຊີປະເພດທຸລະກິດຄວບຄຸມ ຕາມເອກະສານຄັດຕິດ " ກ " ຂອງດຳລັດສະບັບນີ້.

ມາດຕາ 2 : ບັນຊີປະເພດທຸລະກິດຄວບຄຸມ ໝາຍເຖິງບັນຊີປະເພດທຸລະກິດ ທີ່ມີຄວາມອ່ອນໄຫວສູງ, ເປັນຕົ້ນ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ແລະ ສະພາວະແວດລ້ອມ, ຊຶ່ງຈຳເປັນຕ້ອງໄດ້ຮັບການພິຈາລະນາ ກວດສອບຜ່ານຂະແໜງການກ່ຽວຂ້ອງ ກ່ອນການຂຶ້ນທະບຽນວິສາຫະກິດ. ແຕ່ບັນຊີປະເພດທຸລະກິດຄວບຄຸມ ບໍ່ແມ່ນບັນຊີປະເພດທຸລະກິດເກືອດຫ້າມ ການດຳເນີນທຸລະກິດ ຢູ່ ສປປ ລາວ.

ມາດຕາ 3 : ລັດຖະບານ ແຫ່ງ ສປປ ລາວ ສົ່ງເສີມການລົງທຶນ ແລະ ການປະກອບອາຊີບຂອງປະຊາຊົນລາວ ໃຫ້ຂະຫຍາຍຕົວຢ່າງແຂງແຮງ, ໂດຍຜ່ານລະບົບການຂຶ້ນທະບຽນຜ່ານປະຕູດຽວທີ່ສະດວກວ່ອງໄວ ແລະ ງ່າຍດາຍ, ໝາຍຄວາມວ່າ :

- ປະເພດທຸລະກິດ ທີ່ຈະຂຶ້ນທະບຽນວິສາຫະກິດ ຫາກບໍ່ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງຂະແໜງການຄ້າ ຕ້ອງພິຈາລະນາ ກ່ຽວກັບການອອກທະບຽນໃຫ້ວິສາຫະກິດ ໂດຍບໍ່ຜ່ານການພິຈາລະນາ ແລະ ກວດສອບ ຂອງຂະແໜງການທີ່

ກ່ຽວຂ້ອງ ຢ່າງຊ້າບໍ່ໃຫ້ເກີນສິບວັນລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງແຈ້ງຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ.

- ປະເພດທຸລະກິດທີ່ຈະຂຶ້ນທະບຽນວິສາຫະກິດ ຫາກນອນຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ຂະແໜງການຄ້າ ຕ້ອງສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງໃນທັນໃດ. ຂະແໜງການດັ່ງກ່າວ ຕ້ອງພິຈາລະນາ ແລະ ຕອບຢ່າງຊ້າບໍ່ໃຫ້ເກີນສິບວັນລັດຖະການ, ເວັ້ນເສຍແຕ່ບາງປະເພດທຸລະກິດ ທີ່ມີຄວາມຈໍາເປັນຕ້ອງກວດສອບຜ່ານທາງດ້ານເຕັກນິກ ຫຼື ວິຊາການ ທີ່ຕ້ອງໃຊ້ເວລາຫລາຍກວ່ານັ້ນ, ຫລັງຈາກນັ້ນ ຂະແໜງການຄ້າຕ້ອງພິຈາລະນາ ກ່ຽວກັບການອອກທະບຽນວິສາຫະກິດ ຢ່າງຊ້າບໍ່ໃຫ້ເກີນສາມວັນລັດຖະການ. ຖ້າບໍ່ອອກທະບຽນໃຫ້ວິສາຫະກິດນັ້ນ ຕ້ອງຕອບເປັນລາຍລັກອັກສອນ ພ້ອມທັງອະທິບາຍເຫດຜົນໃຫ້ຜູ້ຍື່ນຄໍາຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຊາບ.

<u>ມາດຕາ 4</u> : ໃຫ້ຂະແໜງການທີ່ກ່ຽວຂ້ອງ ປັບປຸງ ຫຼື ອອກນິຕິກໍາ ກ່ຽວກັບຂັ້ນຕອນການພິຈາລະນາ ແລະ ການກວດສອບ ກ່ອນການຂຶ້ນທະບຽນວິສາຫະກິດຕໍ່ປະເພດທຸລະກິດ ທີ່ນອນຢູ່ໃນບັນຊີຄວບຄຸມຂອງຂະແໜງການຕົນ ໃຫ້ລະອຽດ ຈະແຈ້ງ ງ່າຍດາຍ ຕາມກໍານົດເວລາ ທີ່ໄດ້ບົ່ງໄວ້ໃນວັກສອງ ມາດຕາ 14 ຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ດໍາລັດ ສະບັບນີ້.

<u>ມາດຕາ 5</u> : ບັນດາຂະແໜງການທີ່ກ່ຽວຂ້ອງ ສາມາດສະເໜີໃຫ້ລັດຖະບານ ພິຈາລະນາເພີ່ມ ຫຼື ຫລຸດລາຍການປະເພດທຸລະກິດ ທີ່ຂະແໜງການຕົນຮັບຜິດຊອບ ໃນບັນຊີປະເພດທຸລະກິດຄວບຄຸມໄດ້ ຕາມຄວາມເໝາະສົມ ແລະ ຄວາມຈໍາເປັນໃນແຕ່ລະໄລຍະ.

ຫ້າມບໍ່ໃຫ້ພາກສ່ວນໃດເພີ່ມ ຫຼື ຫລຸດບັນຊີລາຍການປະເພດທຸລະກິດຄວບຄຸມ ຫຼື ເພີ່ມກໍານົດເວລາ ໃນການພິຈາລະນາອອກທະບຽນວິສາຫະກິດ ໂດຍຂັດກັບກົດໝາຍ ວ່າດ້ວຍວິສາຫະກິດ ແລະ ດໍາລັດສະບັບນີ້. ໃນກໍລະນີລະເມີດ ໃຫ້ນໍາໃຊ້ມາດຕະການຕໍ່ຜູ້ລະເມີດ ຕາມທີ່ໄດ້ບົ່ງໄວ້ໃນກົດໝາຍ ວ່າດ້ວຍວິສາຫະກິດ ຢ່າງເຂັ້ມງວດ.

<u>ມາດຕາ 6</u> : ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ລົບລ້າງນິຕິກໍາ, ລະບຽບການ ແລະ ຂັ້ນຕອນການພິຈາລະນາ, ການກວດສອບ ຫຼື ການອອກອະນຸຍາດຂອງຂະແໜງການຕົນ ກ່ອນການຂຶ້ນທະບຽນວິສາຫະກິດ ຕໍ່ທຸກປະເພດທຸລະກິດ ທີ່ບໍ່ນອນຢູ່ໃນບັນຊີປະເພດທຸລະກິດຄວບຄຸມ.

<u>ມາດຕາ 7</u> : ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງ ຮີບຮ້ອນ ປັບປຸງນິຕິກໍາຂອງຕົນທີ່ມີແລ້ວ ຫຼື ອອກນິຕິກໍາໃໝ່ ທີ່ເຫັນວ່າຈໍາເປັນ ໃຫ້ຈະແຈ້ງ ຮັດກຸມ ແລະ ສອດຄ່ອງກັບກົດໝາຍ ແລະ ນິຕິກໍາອື່ນໆ ຂອງລັດຖະບານ ເພື່ອເພີ່ມທະວີການຄຸ້ມຄອງຕິດຕາມການເຄື່ອນໄຫວທຸລະກິດ ຂອງວິສາຫະກິດ ທີ່ຂະແໜງການຕົນຮັບຜິດຊອບ ທີ່ໄດ້ຂຶ້ນທະບຽນແລ້ວ ເຊັ່ນ: ການກໍານົດເງື່ອນໄຂ ເຄື່ອນໄຫວທຸລະກິດໃດໜຶ່ງ, ການກວດສອບ, ການຢັ້ງຢືນ, ການຮັບຮອງ ຫຼື ການອອກອະນຸຍາດຕໍ່ ທັງປະເພດທຸລະກິດທີ່ຢູ່ໃນ ແລະ ຢູ່ນອກບັນຊີປະເພດທຸລະກິດຄວບຄຸມ ຕາມທີ່ໄດ້ກໍານົດໄວ້ໃນວັກສອງ ມາດຕາ 230 ຂອງກົດໝາຍວ່າດ້ວຍວິສາຫະກິດ.

<u>ມາດຕາ 8</u> : ໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນໃຈກາງ ໃນການເຜີຍແຜ່ ແນະນໍາ ແລະ ຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ໄດ້ຮັບຜົນດີ. ໃຫ້ບັນດາ

ກະຊວງ, ອົງການ ແລະ ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງພ້ອມກັນຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

<u>ມາດຕາ 9</u> : ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ